ບໍລິສັດ AGL ປະກັນໄພລາວ
Assurances General Laos

**ບໍລິສັດ ປະກັນໄພແຫ່ງປະເທດລາວ ຈຳກັດຜູ້ດຽວ**
ເລກທີ 33, ຖະໜົນ ລ້ານຊ້າງ, ອາຄານ AGL
ຕູ້ ປ.ນ. 4223 ນະຄອນຫຼວງວຽງຈັນ, ສປປລາວ
ໂທລະສັບ: 1457; +856 21 215903;
ແຈ້ງອຸປະຕິເຫດ 24 ຊົ່ວໂມງ ໂທ: 1456, 021 222 2220020 5524 4222

# ແບບຟອມໃບສະເໜີເອົາປະກັນໄພທີ່ຢູ່ອາໃສ

(ກະລຸນາຕື່ມຂໍ້ມູນໃຫ້ຄົບຖ້ວນ √ ໃນຫ້ອງຄຳຕອບທີ່ທ່ານເລືອກ)

## ຂໍ້ມູນຂອງຜູ້ສະເໜີເອົາປະກັນໄພ

**ຊື່ ແລະ ນາມສະກຸນຂອງຜູ້ສະເໜີ:** ທ່ານ/ທ່ານ ນາງ.________________________ ☐ ເປັນເຈົ້າຂອງອາຄານ ☐ ເປັນຜູ້ເຊົ່າ

ວັນ, ເດືອນ, ປີເກີດ:______/______/__________, ເລກບັດປະຈຳຕົວ________________ ສັນຊາດ: __________ ອາຊີບ: ______________

**ທີ່ຢູ່ປະຈຸບັນຂອງຜູ້ສະເໜີ:**

ເຮືອນເລກທີ: ___________ ໜ່ວຍ: _______________ ຕູ້ໄປສະນີ: _____________ ບ້ານ: ______________________ ເມືອງ: ______________________

ແຂວງ: ________________________ ເບີໂທລະສັບ: ________________________

**ເບີມືຖື** (ກະລຸນາແຈ້ງເບີທີ່ຕິດຕໍ່ໄດ້): ________________________ ທີ່ຢູ່E-mail: ________________________

**ຊື່ແລະນາມສະກຸນຂອງຜູ້ໄດ້ຮັບການປະກັນໄພ ຫຼືຜູ້ຮັບສິນປະໂຫຍດ (ກໍລະນີບໍ່ແມ່ນຜູ້ສະເໜີ): ທ່ານ/ທ່ານ ນາງ:** ________________________

**ເບີມືຖື** (ກະລຸນາແຈ້ງເບີທີ່ຕິດຕໍ່ທ່ານໄດ້): ________________________ ທີ່ຢູ່E-mail:________________________

**ທີ່ຕັ້ງ/ທີ່ຢູ່ຂອງຊັບສິນຈະເອົາປະກັນໄພ (ກໍລະນີບໍ່ແມ່ນທີ່ຢູ່ລະບຸຂ້າງເທິງນີ້)** ☐ ຄືກັນກັບທີ່ຢູ່ປະຈຸບັນ

ເຮືອນເລກທີ: _______________ ໜ່ວຍ: __________ ບ້ານ: __________________ ເມືອງ: ______________________ ແຂວງ: ______________________

## ຂໍ້ມູນຂອງຊັບສິນຈະເອົາປະກັນໄພ

1. ອາຄານສ້າງຈາກວັດສະດຸຫຍັງ? (ກໍລະນີ ມີຫຼາຍກ່ວາໜຶ່ງຫຼັງ, ກະລຸນາແຍກຂໍ້ມູນແຕ່ລະຫຼັງ)

| | | | | |
|---|---|---|---|---|
| ກ) ຝາ? | ☐ ຄອນກີຣດເສີມເຫຼັກ | ☐ ດິນຈີ່ | ☐ ໄມ້ | ☐ ອື່ນໆ, ກະລຸນາລະບຸ: __________ |
| ຂ) ເສົາ? | ☐ ຄອນກີຣດເສີມເຫຼັກ | ☐ ເຫຼັກ | ☐ ໄມ້ | ☐ ອື່ນໆ, ກະລຸນາລະບຸ: __________ |
| ຄ) ຄານ? | ☐ ຄອນກີຣດເສີມເຫຼັກ | ☐ ເຫຼັກ | ☐ ໄມ້ | ☐ ອື່ນໆ, ກະລຸນາລະບຸ: __________ |
| ງ) ໂຄງຫຼັງຄາ? | ☐ ຄອນກີຣດເສີມເຫຼັກ | ☐ ເຫຼັກ | ☐ ໄມ້ | ☐ ອື່ນໆ, ກະລຸນາລະບຸ: __________ |
| ຈ) ຫຼັງຄາມຸງຈາກ? | ☐ ກະເບື້ອງ | ☐ ສັງກະສີ | ☐ ອື່ນໆ, ກະລຸນາລະບຸ: | __________ |

2. ອາຄານມີຈັກຊັ້ນ? ☐ 1-ຊັ້ນ ☐ 2-ຊັ້ນ ☐ ອື່ນໆ, ກະລຸນາລະບຸ: __________
3. ປີກໍ່ສ້າງ: ____________________, ຂະໜາດອາຄານ: ລວງຍາວ________________, ລວງກວ້າງ________________
4. ມີກຳແພງ /ຮົ້ວອ້ອມຮອບອາຄານຂອງທ່ານບໍ່? ☐ ມີ ☐ ບໍ່ມີ
5. ມີອາຄານອື່ນໆຢູ່ໃກ້ອາຄານທ່ານໃນໄລຍະໜ້ອຍ<10 ແມັດ? (ບໍ່ລວມອາຄານນ້ອຍໃນຂອບເຂດເຮືອນ) ☐ ມີ ☐ ບໍ່ມີ

## ມູນຄ່າຄຸ້ມກັນ

*ມູນຄ່າທີ່ສະເໜີເອົາປະກັນໄພຕ້ອງເປັນມູນຄ່າເຕັມຂອງຊັບສິນ. ປະກັນໄພນີ້ມີເງື່ອນໄຂຄຸ້ມກັນຕາມອັດຕາສະເລ່ຍ, ຊຶ່ງໝາຍຄວາມວ່າ ຖ້າໃນມື້ເກີດຄວາມສູນເສຍ ຫຼື ເສຍຫາຍ ຫາກເຫັນວ່າມູນຄ່າຄຸ້ມກັນຕ່ຳກ່ວາມູນຄ່າເຕັມຂອງຊັບສິນທີ່ເອົາປະກັນໄພ ມູນຄ່າສິນທົດແທນຈະຖືກຫຼຸດລົງຕາມອັດຕາສ່ວນ.*

| | |
|---|---|
| 1. **ອາຄານ**<br>*ເປັນອາຄານທີ່ນຳໃຊ້ເພື່ອຈຸດປະສົງໃນການຢູ່ອາໃສ ລວມທັງອາຄານຈອດລົດ, ເຮືອນຄົວ, ເຮືອນຮັບໃຊ້ (ບໍ່ລວມຮົ້ວ/ກຳແພງ ແລະ ປະຕູຮົ້ວ)* | ກີບ________________ |
| 2. **ເຄື່ອງໃຊ້ໃນອາຄານ**<br>*ລວມມີເຄື່ອງເຟີນີເຈີ້, ເຄື່ອງທີ່ຕິດຕັ້ງ, ປັບປຸງຕົບແຕ່ງໃນອາຄານ, ເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງໃຊ້ໄຟຟ້າ, ອຸປະກອນເຄື່ອງແຕ່ງກິນ, ເສື້ອຜ້າຂອງຜູ້ໄດ້ຮັບການປະກັນໄພ ແລະ ຂອງສະມາຊິກໃນຄອບຄົວຂອງຜູ້ໄດ້ຮັບການປະກັນໄພ.* | ກີບ________________ |
| 3. **ວົງເງິນຄຸ້ມກັນຄວາມຮັບຜິດຊອບຕໍ່ເຮືອນຂ້າງຄຽງ**<br>*ຄວາມຮັບຜິດຊອບຕາມກົດໝາຍກໍລະນີໄຟລາມໄປໄໝ້ເຮືອນຂ້າງຄຽງ* | ☐ ກີບ 200,000,000 ☐ ກີບ 500,000,000 ☐ ກີບ 1,000,000,000 ອື່ນໆ: ________________ |
| 4. **ວົງເງິນຄຸ້ມກັນຄວາມຮັບຜິດຊອບຂອງຫົວໜ້າຄອບຄົວ**<br>*ຄວາມຮັບຜິດຊອບຕາມກົດໝາຍຕໍ່ບຸກຄົນທີສາມ* | ☐ ກີບ 10,000,000 ☐ ກີບ 30,000,000 ☐ ກີບ 50,000,000 ອື່ນໆ: ________________ |

## ກະລຸນາເລືອກການຄຸ້ມກັນທີ່ທ່ານຕ້ອງການ

☐ **ຂັ້ນພື້ນຖານ** ຄຸ້ມກັນອັກຄີໄພ, ຄວາມຮັບຜິດຊອບຂອງຫົວໜ້າຄອບຄົວ ແລະ ຄວາມຮັບຜິດຊອບຕໍ່ເຮືອນຂ້າງຄຽງ

☐ **ຂັ້ນຈຳເປັນ** ຄຸ້ມກັນອັກຄີໄພ, ຄວາມຮັບຜິດຊອບຂອງຫົວໜ້າຄອບຄົວ, ຄວາມຮັບຜິດຊອບຕໍ່ເຮືອນຂ້າງຄຽງ, ຄວາມເສຍຫາຍຍ້ອນນ້ຳ, ລົມພະຍຸ ແລະ ແຜ່ນດິນໄຫວ

☐ **ຂັ້ນສູງ** ຄຸ້ມກັນອັກຄີໄພ, ຄວາມຮັບຜິດຊອບຂອງຫົວໜ້າຄອບຄົວ, ຄວາມຮັບຜິດຊອບຕໍ່ເຮືອນຂ້າງຄຽງ, ຄວາມເສຍຫາຍຍ້ອນນ້ຳ, ລົມພະຍຸ, ແຜ່ນດິນໄຫວ, ແກ້ວແວ່ນແຕກ ແລະ ຄວາມເສຍຫາຍຂອງເຄື່ອງໃຊ້ໄຟຟ້າ

☐ **ຂັ້ນຮອບດ້ານ** ຄຸ້ມກັນອັກຄີໄພ, ຄວາມຮັບຜິດຊອບຂອງຫົວໜ້າຄອບຄົວ, ຄວາມຮັບຜິດຊອບຕໍ່ເຮືອນຂ້າງຄຽງ, ຄວາມເສຍຫາຍຍ້ອນນ້ຳ, ລົມພະຍຸ, ແຜ່ນດິນໄຫວ, ແກ້ວແວ່ນແຕກ, ຄວາມເສຍຫາຍຂອງເຄື່ອງໃຊ້ໄຟຟ້າ ແລະ ການລັກ

☐ **ອື່ນໆ, ກະລຸນາລະບຸ:** ________________________

## ການຊຳລະຄ່າທຳນຽມປະກັນໄພ

☐ ຊຳລະງວດດຽວ ☐ ຊຳລະ 2 ງວດຕໍ່ປີ ☐ ຊຳລະ 4 ງວດຕໍ່ປີ

## ໄລຍະເວລາປະກັນໄພ

01 ປີ, ວັນທີເລີ່ມການຄຸ້ມກັນ: ________/________/__________ ວັນທີໝົດອາຍຸ: ________/________/__________

## ຄຳຢືນຢັນ

*ຂ້າພະເຈົ້າ (ຜູ້ສະເໜີເອົາປະກັນໄພ) ຂໍຢືນຢັນວ່າ ຂໍ້ມູນທີ່ໃຫ້ມາຂ້າງເທິງນີ້ແມ່ນຄວາມຈິງ ແລະ ຖືກຕ້ອງທຸກປະການ. ໃນກໍລະນີຂໍ້ມູນຂ້າງເທິງນີ້ມີການປ່ຽນແປງ ຂ້າພະເຈົ້າຈະແຈ້ງຫາ ບໍລິສັດ ປະກັນໄພແຫ່ງປະເທດລາວ ຈຳກັດຜູ້ດຽວ ເປັນລາຍລັກອັກສອນທັນທີ ທີ່ຮັບຮູ້ເຖິງການປ່ຽນແປງນັ້ນ.*

________________________ ________________________

**ເຊັນ ຜູ້ສະເໜີເອົາປະກັນໄພ** **ເຊັນ ຕົວແທນຂາຍປະກັນໄພ**

ວັນທີ: ________/________/__________ ລະຫັດຕົວແທນ: ☐

- <u>ລາຍລະອຽດການຄຸ້ມກັນ / **Detail of Covers:**</u>

| | | | | | | | |
|---|---|---|---|---|---|---|---|
| ທຳມະດາ / **Basic** | ✓ | ✓ | ✓ | | | | |
| ຂັ້ນຈຳເປັນ / **Essential** | ✓ | ✓ | ✓ | ✓ | | | |
| ຂັ້ນສູງ / **Superior** | ✓ | ✓ | ✓ | ✓ | ✓ | ✓ | |
| ຮອບດ້ານ / **All Inclusive** | ✓ | ✓ | ✓ | ✓ | ✓ | ✓ | ✓ |
| ອື່ນໆ / **Other** | | | | | | | |
| **ທາງເລືອກ** / Option<br>**ການຄຸ້ມກັນ** Coverage | ອັກຄີໄພ<br>Fire | ຄວາມຮັບຜິດຊອບຂອງຫົວໜ້າຄອບຄົວ<br>Family Liability | ຄວາມຮັບຜິດຊອບຕໍ່ເຮືອນຂ້າງຄຽງ<br>Liability Towards Neighbours | ຄວາມເສຍຫາຍຍ້ອນນ້ຳ<br>Water Damage | ແກ້ວແອ່ນແຕກ<br>Glass Breakage | ຄວາມເສຍຫາຍຂອງເຄື່ອງໃຊ້ໄຟຟ້າ<br>Electrical Damage | ການລັກ<br>Burglary |

- <u>**ວົງເງິນຄຸ້ມກັນໃນແຕ່ລະປະເພດຄວາມສ່ຽງໄພ** / Limit of Cover for each peril:</u>

**1.** ອັກຄີໄພ: 100% ຂອງມູນຄ່າປະກັນໄພຕົວອາຄານ ແລະ ເຄື່ອງໃຊ້ໃນອາຄານ / Fire : 100% of Sum Insured of Building and Home Contents.
**2.** ຄວາມຮັບຜິດຊອບຂອງຫົວໜ້າຄອບຄົວ / Family Liability : ກີບ/LAK...........................
**3.** ຄວາມຮັບຜິດຊອບຕໍ່ເຮືອນຂ້າງຄຽງ / Liability to Neighbours: ກີບ/LAK ...........................
4. ຄວາມເສຍຫາຍຍ້ອນນ້ຳ-ລົມພະຍຸ: 100% ຂອງມູນຄ່າຕົວອາຄານ ແລະ ເຄື່ອງໃຊ້ໃນອາຄານ / Water damage-Storm: 100% of Sum Insured of Building and Home Contents
5. ແກ້ວແອ່ນແຕກ: 2% ຂອງມູນຄ່າອາຄານ / Glass Breakage : 2% of Building value
6. ຄວາມເສຍຫາຍຂອງເຄື່ອງໃຊ້ໄຟຟ້າ: 50% ຂອງມູນຄ່າປະກັນໄພເຄື່ອງໃຊ້ໃນອາຄານ, ສູງສຸດ 50,000,000ກີບ / Electrical Damage : 50% of Sum Insured of Home Contents, maximum LAK 50,000,000 only.
7. ການລັກ: 100% ຂອງມູນຄ່າປະກັນໄພເຄື່ອງໃຊ້ໃນອາຄານ / Burglary : 100% of Sum Insured of Home Contents.

- <u>**ຄວາມຮັບຜິດຊອບເອງ** / **Deductible**</u>**:**

❖ ການລັກ, ຄວາມເສຍຫາຍຍ້ອນນ້ຳ-ລົມພະຍຸ ແລະ ຄວາມເສຍຫາຍຂອງເຄື່ອງໃຊ້ໄຟຟ້າ: 1,000,000 ກີບ ສຳລັບຄວາມເສຍຫາຍໃນແຕ່ລະຄັ້ງ / Burglary, Water damages - Storm and Electrical damage : LAK 1,000,000 for any one occurrence.
❖ ຄວາມຮັບຜິດຊອບຂອງຫົວໜ້າຄອບຄົວ: 10% ຂອງມູນຄ່າເສຍຫາຍ, ຕ່ຳສຸດ 300,000 ກີບ ສຳລັບຄວາມເສຍຫາຍໃນແຕ່ລະຄັ້ງ / Family Liability : 10% of total damages, minimum LAK 300,000 for material damages only.
❖ ຄວາມເສຍຫາຍທີ່ເກີດຈາກອັກຄີໄພ, ຄວາມຮັບຜິດຊອບຕໍ່ເຮືອນຂ້າງຄຽງ ແລະ ແກ້ວແອ່ນແຕກ, ບປລ ຈ່າຍຕາມຄວາມເສຍຫາຍຕົວຈິງແຕ່ບໍ່ເກີນວົງເງິນທີ່ລະບຸໃນສັນຍາ / Fire, Liability to Neighbours and Glass Breakage, AGL will be liable according to the actual value of loss or damage but not exceeding the Sum Insured stated in the Schedule.

- <u>**ຂໍ້ຍົກເວັ້ນທົ່ວໄປ / General Exclusion:**</u>

<u>**ຂໍ້ຍົກເວັ້ນຂອງພາກທີ 1**</u>**: ການປະກັນໄພຊັບສິນ (**ສັນຍາປະກັນໄພທີ່ຢູ່ອາໃສ FIH-1.0_2022)
ການປະກັນໄພນີ້ຈະບໍ່ຄຸ້ມກັນເຫດການ, ດັ່ງຕໍ່ໄປນີ້ :

1. **ຄວາມເສຍຫາຍ** ທີ່ເກີດຂຶ້ນເຊິ່ງມີຜົນກະທົບໂດຍກົງ ຫຼື ທາງອ້ອມຈາກສົງຄາມ, ການຮຸກຮານ, ການກະທຳທີ່ເປັນສັດຕູ ຫຼື ສົງຄາມ( ປະກາດ ຫຼື ບໍ່ປະກາດກໍ່ຕາມ ), ສົງຄາມກາງເມືອງ, ການກໍ່ການຈະລາຈົນ, ການກໍ່ຄວາມວຸ້ນວາຍ, ການນັດຢຸດງານ, ການລຸກຮື້ຂື້ນຈາກຝ່າຍພົນລະເຮືອນ ຫຼື ທະຫານ, ການກະບົດ, ການເຄື່ອນໄຫວແບບກໍ່ການຮ້າຍ, ການປະຕິວັດ, ການປະກາດກົດໄອຍະການເສິກ.
2. **ຄວາມເສຍຫາຍທີ່ເປັນຜົນໂດຍກົງ ຫຼື ທາງອ້ອມຈາກສາເຫດດັ່ງລຸ່ມນີ້ :**
2.1 ນ້ຳຖ້ວມ ຫຼື ນ້ຳທີ່ຊຶມຜ່ານຝາ, ພື້ນ ຫຼືຫ້ອງໃຕ້ດິນ
2.2 ຄວາມເສຍຫາຍເກີດຈາກການບົ່ມໝັກ, ເກີດຈາກຄວາມຮ້ອນຕາມທຳມະຊາດ, ການເຜົາໄໝ້ດ້ວຍຕົວມັນເອງຂອງຊັບສິນທີ່ປະກັນໄພໄວ້ ຫຼືໃນລະຫວ່າງການໃຊ້ຄວາມຮ້ອນ ຫຼືການຜະລິດ.
2.3 ແຜ່ນດິນຢຸບ ຫຼື ດິນເຈື່ອນ
2.4 ຄວາມເສຍຫາຍຈາກການເຜົາຊັບສິນບັດໂດຍຄຳສັ່ງຂອງເຈົ້າໜ້າທີ່ລັດຖະການ.
2.5 ໄຟໄໝ້ປ່າ, ການຈູດປ່າ ຫຼື ການເຜົາປ່າເພື່ອຖາງພື້ນທີ່.
2.6 ການແຜ່ລັງສີ ຫຼື ການປົນເປື້ອນກຳມັນຕະພາບລັງສີຈາກພະລັງນິວເຄຼຍ ຫຼື ຈາກການຕົກຕະກອນຂອງນິວເຄຼຍ, ການເຜົາໄໝ້ຂອງພະລັງນິວເຄຼຍ ຫຼື ຈາກການແຕກຂອງພະລັງນິວເຄຼຍ.
2.7 ອາວຸດນິວເຄຼຍ,
2.8 ລະເບີດທີ່ເປັນສານພິດກຳມັນຕະພາບລັງສີ ຫຼືວັດຖຸອັນຕະລາຍປະກອບເປັນລະເບີດນິວເຄຼຍ ຫຼືສ່ວນປະກອບຕ່າງໆຂອງນິວເຄຼຍ.
2.9 ຊັບສິນບັດທີ່ຖືກລັກໃນລະຫວ່າງ ແລະ ພາຍຫຼັງການເກີດອັກຄີໄພ.
3. **ຊັບສິນທີ່ບໍ່ໄດ້ຮັບການຄຸ້ມກັນໃນສັນຍາປະກັນໄພນີ້, ເວັ້ນແຕ່ໄດ້ມີການຕົກລົງແລະຖືກລະບຸໄວ້ໃນສັນຍາ:**
3.1 ວັດຖຸມີຄ່າເຊັ່ນ: ເງິນ, ຄຳ, ແກ້ວປະເສີດ, ເພັດ, ພອຍ ຫຼື ໂລຫະມີຄ່າຕ່າງໆ.
3.2 ວັດຖຸບູຮານ ຫຼື ສິນລະປະວັດຖຸ, ທີ່ມີມູນຄ່າເປັນເງິນລວມກັນເກີນກວ່າ 30% ຂອງມູນຄ່າຄ້ຳປະກັນກ່ຽວກັບອຸປະກອນເຄື່ອງໃຊ້ໃນອາຄານ ຫຼື ມີມູນຄ່າຫຼາຍກວ່າ 10 ລ້ານ ກີບ.
3.3 ສິນຄ້າ ຫຼື ຊັບສິນທີ່ຖືກຝາກໄວ້ ຫຼື ເກັບຮັກສາໄວ້ ຫຼືໃນການດູແລຂອງຜູ້ໄດ້ຮັບການປະກັນໄພ.
3.4 ເອກະສານຕົ້ນສະບັບ, ແຜນຜັງ, ແບບແຕ້ມ, ແມ່ພິມ,
3.5 ໃບຮຸ້ນ, ໃບໜີ້ສິນ, ເອກະສານສຳຄັນຕ່າງໆ, ສະແຕມ, ເງິນຫລຽນ, ທະນາບັດ, ເງິນສົດ, ແຊັກ, ປື້ມບັນຊີເງິນຝາກ ແລະ ເອກະສານຕ່າງໆ ກ່ຽວກັບການບັນຊີ
3.6 ວັດຖຸລະເບີດ ຫຼື ອາວຸດ.
3.7 ຍານພາຫານະ (ລົດທຸກຊະນິດ, ພາຫານະທາງນ້ຳ, ທາງອາກາດ).
3.8 ສັດ, ສັດລ້ຽງ, ພືດສວນ, ຕົ້ນໄມ້, ສິ່ງຂອງຈັດແຕ່ງສວນສະໜາມຫຍ້າ.
3.9 ກຳແພງຮົ້ວ, ປະຕູຮົ້ວ, ປ້າຍ, ຊັບສິນໃນລະຫວ່າງການເຄື່ອນຍ້າຍຫຼືຂົນສົ່ງ.
3.10 ອຸປະກອນເອເລັກໂຕຣນິກແບບພົກພາທຸກຊະນິດລວມມີແຕ່ບໍ່ຈຳກັດສະເພາະ ຄອມພິວເຕີກະເປົາຫິ້ວ, ໂທລະສັບມືຖື, ແທັບເລັດ, ກ້ອງຖ່າຍຮູບ, ກ້ອງວີດີໂອ ແລະອື່ນໆ
3.11 ຊັບສິນຕິດຕັ້ງຢູ່ນອກອາຄານ, ຊັບສິນຫຼືສິນຄ້າທີ່ເກັບ ຫຼື ປະໄວ້ໃນສະຖານທີ່ກາງແຈ້ງ ຫຼື ໃນອາຄານຝາເປີດ (ຍົກເວັ້ນຊັບສິນທີ່ຕິດກັບອາຄານທີ່ໄດ້ຮັບການປະກັນໄພ ແລະ ມູນຄ່າຂອງຊັບສິນດັ່ງກ່າວໄດ້ຖືກລວມເຂົ້າໃນມູນຄ່າຄ້ຳປະກັນ ແລະ ການຄຸ້ມກັນແມ່ນຈຳກັດສະເພາະ ຄວາມສູນເສຍ ຫຼື ເສຍຫາຍຈາກອັກຄີໄພເທົ່ານັ້ນ).
3.12 ຊັບສິນບັດທີ່ໄດ້ຮັບຄວາມເສຍຫາຍ ຫຼື ຖືກທຳລາຍຈາກແຮງດັນ ຫຼື ການສັ່ນສະເທືອນຂອງແຮງລະເບີດ.
3.13 ສະລອຍນ້ຳ.
3.14 ຄວາມເສຍຫາຍສືບເນື່ອງທຸກຢ່າງ.

<u>**ຂໍ້ຍົກເວັ້ນຂອງພາກທີ 2**</u>**: ການປະກັນໄພຄວາມຮັບຜິດຊອບທາງແພ່ງ ຂອງຫົວໜ້າຄອບຄົວ ແລະ ເຮືອນຂ້າງ ຄຽງ (**ສັນຍາປະກັນໄພທີ່ຢູ່ອາໃສ FIH-1.0_2022**)** ການປະກັນໄພນີ້ບໍ່ຄຸ້ມກັນຄວາມຮັບຜິດຊອບອັນເກີດຈາກເຫດການ ດັ່ງຕໍ່ໄປນີ້ :

1. ຄວາມຮັບຜິດຊອບທີ່ກ່ຽວຂ້ອງໂດຍກົງ ຫຼື ທາງອ້ອມຈາກການປະກອບກິດຈະກຳການຄ້າ ຫຼື ທຸລະກິດ ຫຼື ວຽກງານທີ່ຜູ້ໄດ້ຮັບການປະກັນໄພ ເຮັດເປັນອາຊີບ,
2. ຊັບສິນທີ່ເຊົ່າ ຫຼື ຢູ່ພາຍໃຕ້ການດູແລຮັກສາ ຫຼື ເປັນຂອງຜູ້ໄດ້ຮັບການປະກັນໄພ.
3. ການກະທຳໂດຍເຈດຕະນາຂອງຜູ້ໄດ້ຮັບການປະກັນໄພ.
4. ການເສຍຊີວິດ, ການບາດເຈັບ, ການເຈັບປ່ວຍ, ການຕິດພະຍາດຂອງລູກຈ້າງຂອງຜູ້ໄດ້ຮັບການປະກັນໄພ ຫຼື ການຮຽກຮ້ອງຄ່າເສຍຫາຍໃດໆ ທີ່ເກີດຂື້ນໃນເວລາປະຕິບັດງານ.
5. ການເສຍຊີວິດ, ການບາດເຈັບ, ການເຈັບປ່ວຍຂອງຜູ້ໄດ້ຮັບການປະກັນໄພ ຫຼື ບຸກຄົນພາຍໃນຄອບຄົວ.
6. ການຮັບຜິດຊອບໃດໆທີ່ເກີດຈາກການຕັດສິນຄະດີຂອງສານ ຫຼື ຂອງຂະບວນການຍຸດຕິທຳທີ່ຢູ່ຕ່າງປະເທດ.
7. ຄວາມຮັບຜິດຊອບເຊິ່ງເກີດຈາກການເປັນເຈົ້າຂອງ, ການຄອບຄອງ, ການດູແລ, ການຄວບຄຸມການໃຊ້ຍານພາຫານະທຸກຊະນິດທີ່ໃຊ້ດ້ວຍ ເຄື່ອງຈັກລວມທັງເຄື່ອງຈັກຕ່າງໆທີ່ໃຊ້ຊຸກ ຫຼື ລາກ.
8. ຄວາມຮັບຜິດຊອບເຊິ່ງເກີດຈາກ ຫຼື ກ່ຽວເນື່ອງຈາກ ຫຼື ມີຜົນກະທົບໂດຍກົງ ຫຼື ທາງອ້ອມຈາກນ້ຳຖ້ວມ, ນ້ຳເປື້ອນ, ສານເຄມີ, ຝຸ່ນ, ຄວັນ, ອາຍພິດຂອງແຫຼວ ຫຼື ຂອງແຂງທີ່ເປັນພິດ.
9. ຄວາມຮັບຜິດຊອບທີ່ເກີດຈາກສັນຍາທີ່ຜູ້ໄດ້ຮັບການປະກັນໄພໄດ້ເຮັດຂື້ນຕື່ມກັບບຸກຄົນທີ່ສາມ.
10. ການປັບໄໝທາງແພ່ງ, ທາງອາຍາ ຫຼື ໂດຍສັນຍາ.
11. ຄວາມຮັບຜິດຊອບບໍ່ວ່າໃນລັກສະນະໃດໆອັນເກີດຈາກ ຫຼື ກ່ຽວເນື່ອງຈາກ ຫຼື ມີຜົນກະທົບໂດຍກົງ ຫຼື ທາງອ້ອມຈາກ:
    - 11.1 ການຮຸກຮານ, ການກະທຳຂອງສັດຕູຕ່າງຊາດ ຫຼື ສົງຄາມ( ປະກາດ ຫຼື ບໍ່ປະກາດ ) ກໍ່ຕາມ, ສົງຄາມກາງເມືອງ.
    - 11.2 ການກໍ່ການຈະລາຈົນ, ການກໍ່ຄວາມວຸ້ນວາຍ, ການນັດຢຸດງານ, ການລຸກຮື້ຂື້ນຈາກຝ່າຍພົນລະເຮືອນ ຫຼື ທະຫານ, ການກະບົດ, ການ ເຄື່ອນໄຫວແບບກໍ່ການຮ້າຍ, ການປະຕິວັດ, ການປະກາດກົດໄອຍະການເສິກ.
    - 11.3 ການຍຶດ, ການເກນ, ການທຳຮ້າຍ ຫຼື ການທຳຄວາມເສຍຫາຍແກ່ຊັບສິນບັດໂດຍຄຳສັ່ງຂອງເຈົ້າໜ້າທີ່ລັດຖະການ.
    - 11.4 ອາວຸດນິວເຄຼຍ, ການແຜ່ລັງສີ ຫຼື ແຜ່ກຳມັນຕະພາບລັງສີ ຫຼື ການຕົກຕະກອນ ຫຼື ການເຜົາໄໝ້ ຫຼື ການແຕກຂອງພະລັງນິວ ເຄຼຍ.

<u>**GENERAL EXCLUSION OF INSURANCE COVERAGE FOR SECTION 1**</u>**: PROPERTY DAMAGE INSURANCE (Home Insurance Policy FIH-1.0_2022)**

This insurance does not cover any loss or damage directly or indirectly occasioned by or through or in consequence of the following occurrences:-

1. **Damage** occasioned by war, invasion, act of foreign enemy, hostilities, or war-like operations (whether war be declared or not), civil war, rebellion, revolution, insurrection, riot, strike, civil commotion, act of terrorism, revolution, or military, or usurped power, martial law, or any of the events or causes which determine the proclamation of maintaining martial law.
2. **Loss or destruction of or damage directly or indirectly caused by or contributed to by or arising from:-**
2.1 Flood or seepage of water through walls, foundations or basements.
2.2 Own fermentation, natural heating, spontaneous combustion of insured property or by its undergoing any heating or during process.
2.3 Subsidence or landslip
2.4 The burning of property by the order of any public authority.
2.5 The burning of forests, bush or jungle and clearing of lands by fire.
2.6 Ionizing radiations or contamination by radioactivity from any nuclear fuel or from any nuclear waste from the combustion of nuclear fuel or any self-sustaining process of nuclear fission.
2.7 Nuclear weapon.
2.8 The radioactive toxic explosive or other hazardous property of any explosive nuclear assembly or nuclear component thereof.
2.9 Theft during or after the occurrence of a fire.
3. **Property not covered under this insurance policy. Unless otherwise expressly agreed and stated in the policy, this insurance does not cover the following property:-**
3.1 Bullion or precious stones, jewelry or precious metals.
3.2 Any antique or work of art for an amount exceeding 30% of contents sum insured or value more than 10 millions kip.
3.3 Goods or property held in trust or on commission or under custody of the Insured.
3.4 Manuscripts, plans, drawings, designs, patterns, models or moulds.
3.5 Securities, obligations, important documents of any kind, stamps, coins, paper money, cash, cheques, books of account or other business books.
3.6 Explosives.
3.7 All vehicles either on land, waterborne or airborne.
3.8 Animals, livestock, growing crops, trees, decoration of gardens and lawns.
3.9 Fences, gates, signs, moveable property or property in transit
3.10 All portable electronic devises including but not limited to notebook computers, mobile phones, tablets, cameras, video cameras, etc.
3.11 Outdoor fixtures and fittings, property or goods stored in open area or in open-sided building, except for properties attached to the insured building and their values included in the sum insured and coverage is limited to loss or damage by Fire only.
3.12 Property damaged, collapsed or dented by pressure or vibration of explosion.
3.13 Swimming pool
3.14 Consequential loss of any kind.

<u>**GENERAL EXCLUSION OF INSURANCE COVERAGE for SECTION 2**</u>**: FAMILY LIABILITY AND LIABILITY TO NEIGHBOURS ( Home Insurance Policy FIH-1.0_2022)**

The company will not liable in case of loss by follows event:

1. Damages occasioned directly or indirectly by or through or in consequence of commercial operation or the Insured's business or an occupation of the Insured,
2. The property which is belonging to or under rental or under custody of the Insured, the Insured 's family, or any person who is with the Insured,
3. Any consequences acted intentionally by the Insured,
4. Loss of life, injury, sickness, or disease infected of the Insured's employee or the claim for damage arising during working period under Workmen Compensation,
5. Loss of life, injury, sickness of the Insured or the Insured's family.
6. Confession due to the Judge or Court of Justice (not Lao Court of Justice)
7. Confession due to the ownership, governing, maintaining, controlling, applying of every motor vehicles by the insured, include machines or any carriers being pulled or pushed by motor vehicles.
8. Faulty or defective occasioned directly or indirectly from flood, dregs chemical, smoke, gas, solid or liquid toxic, and pollution.
9. Confession due to contract signed by the Insured; There will be no confession unless the Insured constructs or signs the contract.
10. Being fined under Civil Law or Punishment or Contract.
11. Damages occasioned directly or indirectly by or through or in consequence of any of the following occurrences:-
    - 11.1 War, invasion, act of foreign enemies hostilities or warlike operations (whether war be declared or not), civil war.
    - 11.2 Mutiny, riot, strike, military or popular rising, insurrection, rebellion, act of terrorism, revolution, military or usurped power, martial law or any of the events or causes which determine the proclamation or maintenance of martial law,
    - 11.3 Loss or damage arising from detention, confiscation or requisition by customs House or other officials or Authorities,
    - 11.4 Nuclear weapon, ionizing radiations or contamination by radioactivity from any nuclear fuel or from any nu waste from the combustion of nuclear fuel or any self-sustaining process of nuclear fission.

* ສຳລັບຄວາມສ່ຽງທີ່ມີມູຄ່າຫຼາຍກ່ວາ 5,000,000,000 ກີບຂື້ໄປແມ່ຈະຕ້ອງປະກອບມີບົດລາຍງານການສຳຫຼວດຄວາມສ່ຽງໃຫ້ແກ່ຜູ້ປະກັນໄພ / If the Sum Insured is more than LAK 5,000,000,000 Risk Survey must be done to the Insurer.